ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

2588

**ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ**

ເລກທີ 2106 /ຫສນຍ

ນະຄອນຫຼວງວຽງຈັນ, ວັນທີ 13 - 12 - 2018

ເລກທີ 2795

ວັນທີ 13/12/18

# ແຈ້ງການ

**ຮຽນ** : - ທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ ທີ່ນັບຖື.

- ທ່ານ ລັດຖະມົນຕີກະຊວງວິທະຍາສາດ ແລະ ເຕັກໂນໂລຊີ.
- ທ່ານ ລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ.
- ທ່ານ ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ.
- ທ່ານ ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ.

**ເລື່ອງ** : ທິດຊີ້ນຳກ່ຽວກັບການຍົກເວັ້ນການກວດຄຸນນະພາບວັດສະດຸກໍ່ສ້າງທຸກປະເພດ ທີ່ນຳເຂົ້າມາຮັບໃຊ້ໂຄງການກໍ່ສ້າງທາງລົດໄຟລາວ-ຈີນ.

- ອີງຕາມມະຕິຕົກລົງຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 082/ຄປຈ,ລົງວັນທີ 1 ທັນວາ 2015.
- ອີງຕາມສັນຍາສຳປະທານໂຄງການກໍ່ສ້າງທາງລົດໄຟລາວ-ຈີນ ແຕ່ບໍ່ເຕນທານະຄອນຫຼວງວຽງຈັນ ສປປ ລາວ ລະຫວ່າງລັດຖະບານແຫ່ງ ສປປ ລາວ ກັບບໍລິສັດກໍ່ສ້າງທາງລົດໄຟລາວ-ຈີນ ຈຳກັດ ສະບັບລົງວັນທີ 20 ທັນວາ 2016.
- ອີງຕາມການລາຍງານຂອງກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ໃນກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ຄັ້ງວັນທີ 11 - 12 ທັນວາ 2018.
- ອີງຕາມທິດຊີ້ນຳ ແລະ ການຕົກລົງຂອງກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ຄັ້ງວັນທີ 11-12 ທັນວາ 2018.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບ ດັ່ງນີ້: **ຜ່ານມາລັດຖະບານໄດ້ຕົກລົງໃຫ້ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ກວດກາຄຸນນະພາບວັດສະດຸກໍ່ສ້າງ ຕາມແຈ້ງການສະບັບເລກທີ 2006/ຫສນຍ.ກຄສ, ລົງວັນທີ 15 ທັນວາ 2017 ແລະ ສະບັບເລກທີ 2022/ສນຍ.ກນກ, ລົງວັນທີ 26 ພະຈິກ 2018, ຊຶ່ງຜ່ານການຈັດຕັ້ງປະຕິບັດແຈ້ງການດັ່ງກ່າວ ຂະແໜງການທີ່ກ່ຽວຂ້ອງ ໄດ້ລາຍງານຕໍ່ກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ເຫັນວ່າການດຳເນີນການກວດກາຄຸນນະພາບວັດສະດຸກໍ່ສ້າງ ຢູ່ດ່ານຊາຍແດນ ຂອງຂະແໜງວິທະຍາສາດ ແລະ ເຕັກໂນໂລຊີ ໄດ້ມີຜົນກະທົບ ແລະ ສ້າງຄວາມຫຍຸ້ງຍາກໃຫ້ພາກທຸລະກິດ, ດັ່ງນັ້ນ ກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ໄດ້ຊີ້ນຳ ແລະ ຕົກລົງ ໃຫ້ປະຕິບັດດັ່ງນີ້:**

**1) ເຫັນດີໃຫ້ຍົກເວັ້ນການກວດຄຸນນະພາບວັດສະດຸກໍ່ສ້າງທຸກປະເພດ ທີ່ກຳນົດໃນສັນຍາສຳປະທານໂຄງການກໍ່ສ້າງທາງລົດໄຟລາວ-ຈີນ ສະບັບລົງວັນທີ 20 ທັນວາ 2016 ທີ່ນຳເຂົ້າມາຮັບໃຊ້ໂຄງການກໍ່ສ້າງທາງລົດໄຟລາວ-ຈີນ ເພື່ອອຳນວຍຄວາມສະດວກ ໃຫ້ແກ່ການນຳເຂົ້າວັດສະດຸກໍ່ສ້າງທຸກປະເພດ ທີ່ນຳເຂົ້າມາຮັບໃຊ້ໂຄງການກໍ່ສ້າງທາງລົດໄຟລາວ-ຈີນ ໃຫ້ດຳເນີນໄປຕາມແຜນທີ່ກຳນົດ.**

**2) ເຫັນດີໃຫ້ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ສືບຕໍ່ຈັດຕັ້ງປະຕິບັດການກວດຄຸນນະພາບວັດສະດຸກໍ່ສ້າງ ທີ່ນຳເຂົ້າມາຈຳໜ່າຍທົ່ວໄປ, ແຕ່ໃຫ້ກວດຢູ່ປາຍທາງ ( ຕົວແທນຈຳໜ່າຍ ແລະ ຮ້ານຄ້າຈຳໜ່າຍທົ່ວໄປ) ແລະ ບໍ່ໃຫ້ເກັບຄ່າທຳນຽມ ແລະ ຄ່າບໍລິການໃນການກວດຄຸນນະພາບ**

**ດັ່ງກ່າວນຳຜູ້ປະກອບການ, ໃຫ້ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຂຶ້ນແຜນງົບປະມານກວດຄຸນນະພາບວຽກງານດັ່ງກ່າວ ຕາມຄວາມສາມາດຂອງງົບປະມານລັດ ທີ່ມີຕົວຈິງ ໃນແຕ່ລະປີ.**

ດັ່ງນັ້ນ,ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

**ລັດຖະມົນຕີ,**

**ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ**

**ບ່ອນນຳສົ່ງ:**

| | |
|---|---|
| - ນາຍົກ-ຮອງນາຍົກລັດຖະມົນຕີ | 04 ສະບັບ |
| - ຫ້ອງວ່າການສູນກາງພັກ | 01 ສະບັບ |
| - ລັດຖະມົນຕີປະຈຳ ສນຍ | 01 ສະບັບ |
| - ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ | 01 ສະບັບ |
| - ຄະນະ ຫສນຍ | 05 ສະບັບ |
| - ກົມຄົ້ນຄວ້າ-ສັງລວມ | 01 ສະບັບ |
| - ກົມກວດກາ | 01 ສະບັບ |
| - ສຳເນົາ | 01 ສະບັບ |

ເພັດ ພົມພິພັກ